# ການກັບໃຈ ແລະ ການໃຫ້ອະໄພ



ບົດທີ 10 ສຳລັບສະບາໂຕທີ 6 ເດືອນມິຖຸນາ, 2026

“ຖ້າເຮົາທັງຫລາຍ
ສາລະພາບຜິດບາບ
ທັງຫລາຍຂອງພວກເຮົາ
ພຣະອົງຊົງສັດຊື່ ແລະ
ທ່ຽງທຳ ຈະຊົງໂຜດຍົກ
ບາບຂອງພວກເຮົາ ແລະ
ຈະຊົງໂຜດຊຳລະລ້າງ
ເຮົາທັງຫລາຍຈາກການ
ອະທຳໝົດສິ້ນ”

(1 ໂຢຮັນ 1:9)



ພຣະຄຳພີກ່າວວ່າ “ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະ ຂາດຈາກພຣະຣັດສະໝີຂອງພຣະເຈົ້າ” (ໂຣມ 3:23).

ແລະ ພຣະຄຳພີກໍ່ກ່າວວ່າ ພວກເຮົາບໍ່ສາມາດຫລີກລ້ຽງຈາກຄວາມບາບນັ້ນໄດ້ (ຢຣມຢ 13:23; 2:22).

ແຕ່ພຣະເຈົ້າຊົງເຕັມໃຈທີ່ຈະຍົກບາບຂອງພວກເຮົາ ແລະ ບໍ່ມີບາບໃດທີ່ຈະໃຫຍ່ຫລືຮ້າຍແຮງເກີນກວ່າທີ່ພຣະເຈົ້າຈະບໍ່ຍົກໂທດບາບໃຫ້ພວກເຮົາໄດ້ (ອຊຢ 1:18).

ມີພຽງເງື່ອນໄຂດຽວທີ່ພວກເຮົາຕ້ອງເຮັດກໍ່ຄື: ສາລະພາບກັບໃຈ







ການສາລະພາບ:

- ຄວາມລ່າຊ້າໃນການກັບໃຈ
- ການກັບໃຈທີ່ແທ້ຈິງ
- ການຮຽກເອີ້ນໃຫ້ກັບໃຈ

ການໃຫ້ອະໄພ:

- ພຣະຄຸນແຫ່ງການໃຫ້ອະໄພ
- ເຄື່ອງຕຽມແຕ່ງສຳລັບການໃຫ້ອະໄພ



# ການກັບໃຈ



# ຄວາມລ່າຊ້າໃນການກັບໃຈ

"ແຕ່ອົງພຣະຜູ້ເປັນເຈົ້າຕອບນາງວ່າ, ມາທາ ມາທາເອີຍ ເຈົ້າກັງວົນ ແລະ ມົວວຸ້ນວາຍຢູ່ກັບຫລາຍສິ່ງແທ້ໜໍ" (ລກ 10:41 )

ຢູ່ທີ່ບ້ານຂອງລາຊາໂຣ ພຣະເຢຊູໄດ້ກ່າວເຖິງເລື່ອງສຳຄັນ ທີ່ຈຳເປັນຕໍ່ຄວາມລອດ ແຕ່ມາທາບໍ່ໄດ້ຟັງ, ນາງບໍ່ມີເວລາ ມີຫລາຍສິ່ງຫລາຍຢ່າງທີ່ນາງຕ້ອງເຮັດ (ລກ 10:40-41).





ເລື່ອງນີ້ເກີດຂຶ້ນກັບພວກເຮົາເຊັ່ນກັນ ເມື່ອພວກເຮົາເຮັດຄວາມຜິດບາບ ແລະ ພຣະວິນຍານບໍຣິສຸດຊົງຮຽກເອີ້ນໃຫ້ພວກເຮົາສາລະພາບ ແລະ ກັບໃຈ, ຊາຕານເຮັດໃຫ້ພວກເຮົາເຕັມໄປດ້ວຍສິ່ງທີ່ຕ້ອງເຮັດ, ມີຄວາມກັງວົນ ແລະ ມີສິ່ງລົບກວນອື່ນໆ ທີ່ມາຂັດຂວາງບໍ່ໃຫ້ພວກເຮົາໄຕ່ຕອງເຖິງສະຖານະການຄວາມບາບຂອງພວກເຮົາ ແລະ ບໍ່ໃຫ້ພວກເຮົາສະແຫວງຫາການອະໄພ.





ແຕ່ພຣະເຈົ້າບໍ່ເຄີຍຍອມແພ້ທີ່ຈະປະຖິ້ມພວກເຮົາ ພຣະອົງຊົງຍຶດໝັ້ນໃນການຊົງຮຽນເອີ້ນພວກເຮົາ (ອຊກ 33:11). ພຣະອົງຊົງປຽບທຽບຄວາມບາບຂອງພວກເຮົາກັບເສື້ອຜ້າທີ່ສົກກະປົກ (ອຊຢ. 64:6). ພຣະອົງຊົງສະເໜີການແລກປ່ຽນເສື້ອທີ່ສົກກະປົກນັ້ນ ກັບເສື້ອຜ້າທີ່ຂາວສະອາດຂອງພຣະອົງ (ຊຄຣຢ. 3:4), ເສື້ອທີ່ຖືກຊຳລະລ້າງດ້ວຍໂລຫິດຂອງພຣະເຢຊູ (ພນມ 7:14).



# ການກັບໃຈທີ່ແທ້ຈິງ

"ປະຊາຊົນເວົ້າວ່າ, ໃຫ້ພວກເຮົາກັບຄືນໄປຫາພຣະເຈົ້າຢາເວເທາະ ພຣະອົງໄດ້ເຮັດໃຫ້ພວກເຮົາເຈັບປວດ ແຕ່ພຣະອົງຈະຮັກສາພວກເຮົາໃຫ້ດີຢ່າງແນ່ນອນ." (ຮສອ 6:1 )

ການກັບໃຈແມ່ນຫຍັງ? ແມ່ນຫຍັງແມ່ນການກັບໃຈທີ່ແທ້ຈິງກັບການກັບໃຈທີ່ຈອມປອມ? (2 ກຣທ 7:10)

ເມື່ອຄວາມບາບໄດ້ນຳຜົນກະທົບທີ່ພວກເຮົາບໍ່ໄດ້ຄາດຫວັງມາໃຫ້, ພວກເຮົາກໍ່ຮູ້ສຶກເສຍໃຈ. ມັນເປັນສິ່ງທີ່ລະອາຍໃຈ ເພາະສິ່ງທີ່ພວກເຮົາເລືອກເຮັດນັ້ນບໍ່ໄດ້ນຳສິ່ງດີມາສູ່ພວກເຮົາ. ຖ້າວ່າບໍ່ມີຜົນກະທົບຕາມມາ ພວກເຮົາກໍ່ຈະບໍ່ຮູ້ສຶກເສົ້າໃຈສຳລັບການຕັດສິນໃຈເຮັດຜິດ, ມັນບໍ່ແມ່ນການກັບໃຈທີ່ແທ້ຈິງ.

ຖ້າຄວາມຈິງໄດ້ປະກົດຂຶ້ນເຮັດໃຫ້ພວກເຮົາຮູ້ສຶກເສົ້າເສຍໃຈ ແລະປາຖະໜາທີ່ຈະໄດ້ຮັບການໃຫ້ອະໄພຢ່າງແຮງກ້ານັ້ນເກີດຂຶ້ນ (ບໍ່ວ່າຈະມີຜົນລັບໃນທາງບວກຫລືທາງລົບກໍ່ຕາມ), ພວກເຮົາກຳລະຜະເຊີນກັບການກັບໃຈຢ່າງແທ້ຈິງ

ເມື່ອພວກເຮົາເຮັດບາບ ພຣະວິນຍານບໍຣິສຸດ ຈະ"ຈີກພວກເຮົາເປັນຕ່ອນໆ" ແລະ "ເຮັດໃຫ້" ພວກເຮົາຮູ້ສຶກໂສກເສົ້າຢ່າງແທ້ຈິງ. ຖ້າວ່າພວກເຮົາຕອບສະໜອງໂດຍການກັບໃຈຢ່າງແທ້ຈິງ ພຣະເຈົ້າຈະຊົງໃຫ້ອະໄພພວກເຮົາ ແລະ ໃຫ້ອະໄພຄວາມບາບຂອງພວກເຮົາ, (ຮສອ 6:1 ).





# ການຮຽກເອີ້ນໃຫ້ກັບໃຈໃໝ່

"ດັ່ງນັ້ນຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ ໂດຍຫັນຄືນມາຫາພຣະເຈົ້າ ເພື່ອພຣະອົງຈະອະໄພບາບກຳໃຫ້ພວກທ່ານ (ກຈກ 3:19)



ໂຢຮັນຜູ້ໃຫ້ບັບຕິສະມາ ແລະ ພຣະເຢຊູ ເລີ່ມຕົ້ນພັນທະກິດຂອງພວກເພິ່ນດ້ວຍຂ່າວສານທີ່ຄືກັນ ນັ້ນກໍ່ຄື "ຈົ່ງກັບໃຈ" (ມທ 3:1-2; 4:17).

ເປັນຫຍັງການກັບໃຈຈຶ່ງສຳຄັນ? ເພາະວ່າຖ້າປາສະຈາກສິ່ງນີ້ແລ້ວ ກໍ່ຈະບໍ່ມີການໃຫ້ອະໄພ (ກຈກ 2:38; 3:19). ຂະບວນການນີ້ເກີດຂຶ້ນໄດ້ແນວໃດ?



ເພາະຄວາມດີຂອງພຣະອົງຊົງເອີ້ນໃຫ້ກັບໃຈ (ໂຣມ 2:4)

ພວກເຮົາຕອບຮັບການຊົງເອີ້ນຂອງພຣະອົງ

ພຣະເຈົ້າຊົງໃຫ້ອະໄພຄວາມຜິດບາບຂອງພວກເຮົາໂດຍອາໄສພຣະໂລຫິດທີ່ພຣະອົງຫລັ່ງອອກມາທີ່ໄມ້ກາງແຂນ (ກລຊ 1:13-14)

ດ້ວຍຄວາມເສຍໃຈຢ່າງຈິງຈັງຕໍ່ຄວາມຜິດທີ່ໄດ້ເຮັດ

ດ້ວຍການຕັດສິນໃຈຢ່າງຊື່ສັດທີ່ຈະລະຖິ້ມຄວາມບາບ



ສັງເກດວ່າ: ການກັບໃຈ ແລະ ການໃຫ້ອະໄພຄວນນຳພວກເຮົາໄປສູ່ການປະຕິບັດສະເໝີ ເພື່ອປ່ຽນແປງທັດສະນະຄະຕິ ໄປສູ່ການເຊົາເຮັດບາບ (ຢຣ 5:14).





# ການໃຫ້ອະໄພ



# ພຣະຄຸນແຫ່ງການໃຫ້ອະໄພ

“ຂ້າແດ່ພຣະເຈົ້າຢາເວ ຂ້ານ້ອຍມີບາບກຳ ຂໍຊົງໂຜດຮັກສາພຣະສັນຍາ ແລະ ອະໄພບາບກຳໃຫ້ດ້ວຍ” (ພສສ 25:11)



ບໍ່ມີສິ່ງໃດບັງຄັບໃຫ້ພຣະເຈົ້າຊົງອະໄພໂທດໃຫ້ພວກເຮົາ. ບໍ່ມີສິ່ງໃດທີ່ພວກເຮົາເຮັດເພື່ອສົມຄວນກັບການໄດ້ຮັບການອະໄພ. ເພາະພຣະອົງຊົງອະໄພພວກເຮົາໂດຍພຣະຄຸນຂອງພຣະອົງ; ໂດຍຄວາມຮັກອັນບໍ່ມີທີ່ສິ້ນສຸດຂອງພຣະອົງ “ພຣະອົງດີຕໍ່ພວກຂ້ານ້ອຍແທ້ໆ ທັງຍົກໂທດໃຫ້ອະໄພແກ່ຂ້ານ້ອຍດ້ວຍ” (ພສສ 86:5; ອົບພະຍົບ 34:6-7).

ຍ້ອນຄວາມຮັກຂອງພຣະອົງ ທີ່ນຳພຣະອົງໄປສູ່ການເສຍສະຫລະທີ່ໄມ້ກາງແຂນ (ອຟຊ 2:4-5).




ເມື່ອພວກເຮົານຳຄວາມບາບຂອງພວກເຮົາມາທີ່ໄມ້ກາງແຂນ ພຣະເຢຊູຈະຊົງປົດປ່ອຍພວກເຮົາຈາກພາລະອັນໜັກໜ່ວງ

(12:1-2)



# ພຣະຄຸນແຫ່ງການໃຫ້ອະໄພ

“ຂ້າແດ່ພຣະເຈົ້າຢາເວ ຂ້ານ້ອຍມີບາບກຳ ຂໍຊົງໂຜດຮັກສາພຣະສັນຍາ ແລະ ອະໄພບາບກຳໃຫ້ດ້ວຍ” (ພສສ 25:11)



ແມ່ນຫຍັງແມ່ນຄວາມສຳພັນລະຫວ່າງ ຄວາມບາບ ແລະ ພຣະຄຸນ?

## ຄວາມສຳພັນລະຫວ່າງ ຄວາມບາບ ແລະ ພຣະຄຸນ

- **ໂຣມ 5:8**
  - “ຂະນະທີ່ພວກເຮົາຍັງເປັນຄົນບາບ”
  - “ພຣະຄຣິດຊົງຕາຍເພື່ອເຮົາ”
- **ໂຣມ 5:20**
  - “ບ່ອນທີ່ຄວາມບາບເພີ່ມຂຶ້ນ”
  - “ພຣະຄຸນຍິ່ງເພີ່ມຂຶ້ນ”
- **ໂຣມ 5:21**
  - “ຄວາມບາບນຳໄປສູ່ຄວາມຕາຍ”
  - “ພຣະຄຸນນຳໄປສູ່ຊີວິດນິຣັນດອນ”
- **ໂຣມ 6:23**
  - “ຄ່າຈ້າງຂອງຄວາມບາບຄືຄວາມຕາຍ”
  - “ຂອງປະທານຂອງພຣະອົງແມ່ນຊີວິດນິຣັນ”



# ເຄື່ອງຕົບແຕ່ງສຳລັບການໃຫ້ອະໄພ

**“ກະສັດຈຶ່ງຖາມລາວວ່າ ສະຫາຍເອີຍ ເຫດໃດເຈົ້າຈຶ່ງເຂົ້າມາທີ່ນີ້ໂດຍບໍ່ນຸ່ງເຄື່ອງສຳລັບພິທີງານສົມຣົດ?” (ມທ 22:12)**



ຄຣິດຕະຈັກຂອງພຣະເຈົ້າ—ແລະສະມາຊິກແຕ່ລະຄົນ—ແມ່ນຕົບແຕ່ງ ຫລື ສວມດ້ວຍ “ຜ້າປ່ານເນື້ອລະອຽດເສາະໃສແລະບໍຣິສຸດ” (ການປະຕິບັດອັນຊອບທຳ) “ບໍ່ມີຈຸດດ່າງດຳ ຫລື ຕຳນິໃດໆ” (ພນມ 19:8; ອຟຊ 5:27).

ຜ້າເລນິນ ຫລື ຜ້າປ່ານເນື້ອລະອຽດດີ ແມ່ນສັນຍາລັກຂອງ “ຄວາມຊອບທຳ ” (ພນມ 19:8b). ແຕ່ຄວາມຊອບທຳນັ້ນບໍ່ແມ່ນຂອງພວກເຂົາເອງ; ແຕ່ມັນໄດ້ຖືກມອບໃຫ້ ໂດຍພຣະເຢຊູ (ພນມ 7:14).





ຕອນທີ່ອາດາມ ແລະ ເອວາ ໄດ້ເຮັດບາບ, ພວກເຂົາປົກປິດຄວາມບາບໂດຍການປະຕິບັດຂອງພວກເຂົາເອງ. ແຕ່ກໍ່ຍັງຄົງຖືວ່າເປືອຍກາຍ ສຳລັບພຣະເຈົ້າແລ້ວ (ພນມ 3:7-10), ເສື້ອຜ້າທີ່ພຣະເຈົ້າປະທານໃຫ້ເປັນສັນຍາລັກຂອງ “ເຄື່ອງແຕ່ງກາຍໃນພິທີສົມຣົດ” ພຣະເຢຊູມອບໃຫ້ພວກເຮົາ: ຄວາມຊອບທຳອັນສົມບູນແບບຂອງພຣະອົງທີ່ລົບລ້າງບາບຂອງພວກເຮົາ (ປຖມກ 3:21; ພສສ 51:7-10).



ບໍ່ມີໃຜທີ່ຈະເຂົ້າສະຫວັນໄດ້ ຖ້າບໍ່ມີເຄື່ອງຕົບແຕ່ງອັນນັ້ນ (ມທ 22:1-14).

“ຜູ້ໃດປາຖະໜາຈະເປັນບຸດຂອງພຣະເຈົ້າ ຕ້ອງຍອມຮັບຄວາມຈິງທີ່ວ່າ ການກັບໃຈ ແລະ ການໄດ້ຮັບການໃຫ້ອະໄພໂທດນັ້ນ ຈະໄດ້ຮັບມາຍ້ອນການໄຖ່ບາບຂອງພຣະຄຣິດເທົ່ານັ້ນ. ເມື່ອໝັ້ນໃຈໃນສິ່ງນີ້ແລ້ວ ຄົນບາບຕ້ອງພະຍາຍາມຢ່າງເຕັມທີ່ ທີ່ຈະມີຊີວິດໃຫ້ສອດຄ່ອງກັບວຽກງານທີ່ພຣະອົງໄດ້ຊົງເຮັດເພື່ອມະນຸດ. ບໍ່ວ່າຈະດ້ວຍການວິງວອນຢ່າງບໍ່ອິດເມື່ອຍ ລາວຕ້ອງວິງວອນຕໍ່ພຣະເຈົ້າຜູ້ເຕັມໄປດ້ວຍພຣະຄຸນ ເພື່ອໃຫ້ພະລັງແຫ່ງການປ່ຽນແປງຂອງພຣະເຈົ້າເຂົ້າມາໃນຈິດວິນຍານຂອງພວກເຂົາ. ເສື້ອຄຸມທີ່ເປັນຜ້າປ່ານເນື້ອລະອຽດດີ ອັນລ້ຳຄ່າ ແລະ ບໍ່ມີບ່ອນຕຳໜິ ເຊິ່ງຖືກທໍສ້າງຂຶ້ນທີ່ສະຫວັນ ໄດ້ຖືກຈັດຕຽມໄວ້ສຳລັບຄົນບາບທີ່ກັບໃຈແລ້ວ”

EGW (Selected Messages, vol. 1, p. 393)